ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 936 /ຈຂ.ອປ

ອັດຕະປື, ວັນທີ 14 ມິຖຸນາ 2016

# ຄຳແນະນຳ

**ເຖິງ:** ບັນດາຫົວໜ້າພະແນກການ, ຫົວໜ້າອົງການທຽບເທົ່າ ອ້ອມຂ້າງແຂວງ, ຫົວໜ້າກອງບັນຊາການ ປກຊ, ຫົວໜ້າກອງບັນຊາການ ປກສ, ເຈົ້າເມືອງ 5 ເມືອງ, ບໍລິສັດ, ຫ້າງຮ້ານ, ນັກທຸລະກິດ ແລະ ພໍ່ແມ່ນປະຊາຊົນ ໃນທົ່ວແຂວງ.

**ເລື່ອງ:** ການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ເລກທີ 10/ນຍ, ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດ IV, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີເລກທີ 10/ນຍ, ລົງວັນທີ 01 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ.

ວຽກງານທະບຽນສານ ເປັນວຽກງານໜຶ່ງ ທີ່ມີບົດບາດສຳຄັນຂອງຂະແໜງຍຸຕິທຳ ໃນການຢັ້ງຢືນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຕາມກົດໝາຍຂອງສັນຍາ ແລະ ເອກະສານອື່ນໆ, ແນໃສ່ເພີ່ມທະວີນິຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານຜ່ານມາ ເຫັນວ່າຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມ ເຖິງຄວາມໝາຍ, ຄວາມສຳຄັນ, ຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນສັນຍາ ແລະ ເອກະສານຕ່າງໆໂດຍຫ້ອງການ ແລະ ໜ່ວຍງານທະບຽນສານ ຍັງບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະ ຍັງມີຄວາມເຂົ້າໃຈບໍ່ຈະແຈ້ງ ລະຫວ່າງ ພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການທະບຽນສານ ກັບສານປະຊາຊົນ. ສະນັ້ນ, ເພື່ອຄວາມເຂົ້າໃຈໃຫ້ເປັນເອກະພາບ ແລະ ຖືກຕ້ອງຕາມກົດໝາຍ; ອົງການທະບຽນສານ ແມ່ນຂຶ້ນກັບຂະແໜງຍຸຕິທຳ, ມີພາລະບົດບາດຢັ້ງຢືນຄວາມຖືກຕ້ອງຂອງສັນຍາ ແລະ ເອກະສານອື່ນໆ ຕາມຄວາມເປັນຈິງ ແລະ ຕາມກົດໝາຍ, ສ່ວນສານປະຊາຊົນ ແມ່ນອົງການຕຸລາການ ມີພາລະບົດບາດພິຈາລະນາຕັດສິນຄະດີຕາມກົດໝາຍ; ໄລຍະຜ່ານມາມີຫຼາຍພາກສ່ວນຍັງຖືເບົາ ພາໃຫ້ເກີດມີຫຼາຍສັນຍາ ຫຼື ຫຼາຍເອກະສານບໍ່ໄດ້ໄປຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍຈາກອົງການທະບຽນສານ ເຊິ່ງມັນໄດ້ສ້າງຄວາມເສຍຫາຍແກ່ສິດ ແລະຜົນປະໂຫຍດອັນຊອບທຳຂອງບຸກຄົນ,

ນິຕິບຸກຄົນ ແລະ ການຈັດຕັ້ງ, ສ້າງຄວາມສັບສົນໃຫ້ແກ່ການຈັດຕັ້ງ ແລະ ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ, ເນື່ອງມາຈາກສັນຍາ ຫຼື ເອກະສານນັ້ນບໍ່ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ ເປັນຕົ້ນ: ສັນຍາຊື້-ຂາຍ, ກູ້ຢືມ, ແລກປ່ຽນ, ຮັບເໝົາກໍ່ສ້າງ, ເຊົ່າ, ພິໄນກຳ, ລາຍເຊັນ, ລາຍໂປ້ມື, ເອກະສານສຳເນົາ ແລະ ເອກະສານອື່ນໆ.

ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມກ່ຽວກັບວຽກງານທະບຽນສານ ແລະ ເຮັດໃຫ້ກົດໝາຍວ່າດ້ວຍທະບຽນສານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ, ທັງເປັນການຍົກສູງຄຸນນະພາບໃນການຢັ້ງຢືນສັນຍາ ຫຼື ເອກະສານອື່ນ ໃຫ້ມີຄຸນຄ່າທາງດ້ານກົດໝາຍ, ເປັນຫຼັກຖານໃຫ້ແກ່ການພິຈາລະນາຄະດີຂອງສານຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະກອບສ່ວນສຳຄັນເຂົ້າໃນການສ້າງຄວາມຍຸຕິທຳ ແລະ ສີວິໄລຂອງສັງຄົມ.

**ເຈົ້າແຂວງແນະນຳ ດັ່ງນີ້:**

1. ໃຫ້ບັນດາພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ ແລະ ນິຕິກຳຕ່າງໆກ່ຽວກັບວຽກງານທະບຽນສານຢ່າງເຂັ້ມງວດ ໂດຍໃຫ້ຖືເອົາການເຄົາລົບ ແລະ ປະຕິບັດກົດໝາຍວ່າດ້ວຍທະບຽນສານ ເປັນຂະບວນການໜຶ່ງທີ່ສຳຄັນ ໃນການສ້າງສັງຄົມລາວ ໃຫ້ເປັນສັງຄົມທີ່ມີຄວາມຍຸຕິທຳ ແລະ ສີວິໄລ ຕາມແນວທາງຂອງພັກ, ປະກອບສ່ວນອັນສຳຄັນເຂົ້າໃນພາລະກິດສ້າງສາ ແລະ ພັດທະນາເສດຖະກິດ-ສັງຄົມຂອງແຂວງ.

2. ໃຫ້ບັນດາພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງທັງພາກລັດ, ເອກະຊົນ ແລະ ພົນລະເມືອງທຸກຄົນຮັບຮູ້ ແລະ ປະຕິບັດ ຢ່າງເປັນເອກະພາບໃນທຸກສັນຍາ ແລະເອກະສານປະເພດຕ່າງໆ **ເຊັ່ນ**: ສັນຍາຊື້-ຂາຍ, ກູ້ຢືມ, ແລກປ່ຽນ, ເຊົ່າ, ຮັບເໝົາກໍ່ສ້າງ, ແຮງງານ, ຮຸ້ນສ່ວນ, ພິໄນກຳ ( ກຳມະສິດກ່ຽວກັບສິນສົມສ້າງ ຫຼື ຊັບເດີມຂອງຄູ່ຜົວເມຍ ), ການແປພາສາ, ລາຍເຊັນ ຫຼື ລາຍໂປ້ມື ( ຕົວບຸກຄົນທຽບກັບຮູບຖ່າຍ ), ການຮັບເອກະສານທີ່ກ່ຽວຂ້ອງກັບການຢັ້ງຢືນ ( ເອກະສານສຳເນົາ ), ວັນ, ເດືອນ, ປີຍື່ນເອກະສານ ແລະ ເອກະສານອື່ນໆ ຈະຖືວ່າເປັນສັນຍາ ຫຼື ເອກະສານທີ່ຖືກຕ້ອງ, ສອດຄ່ອງ ແລະ ມີຄຸນຄ່າທາງດ້ານກົດໝາຍນັ້ນ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານເທົ່ານັ້ນ; ໃນກໍລະນີສັນຍາ ຫຼື ເອກະສານທີ່ຍັງບໍ່ໄດ້ຮັບການຢັ້ງຢືນຈາກອົງການທະບຽນສານນັ້ນ ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ແນະນຳບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນຳເອົາສັນຍາ ຫຼື ເອກະສານດັ່ງກ່າວ ໄປຢັ້ງຢືນຄວາມຖືກຕ້ອງຈາກຫ້ອງການທະບຽນສານຂອງພະແນກຍຸຕິທຳແຂວງ ແລະ ໜ່ວຍງານທະບຽນສານຂອງຫ້ອງການຍຸຕິທຳເມືອງ ທີ່ມີສິດອຳນາດກ່ອນ.

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳເອົາສັນຍາ ຫຼື ເອກະສານຕ່າງໆ ໄປຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍນຳຫ້ອງການ ແລະ ໜ່ວຍງານທະບຽນສານນັ້ນ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການການຕາມກົດໝາຍວ່າດ້ວຍທະບຽນສານ ແລະ ລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

4. ພະແນກຍຸຕິທຳແຂວງ ແລະ ຫ້ອງການຍຸຕິທຳເມືອງ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍທະບຽນສານ ແລະ ນິຕິກຳ ກ່ຽວກັບວຽກງານທະບຽນສານໃຫ້ກ້ວາງຂວາງ ແລະ ເລິກເຊິ່ງ ເພື່ອໃຫ້ບັນດາຂະແໜງການ, ອົງການ ແລະ ພົນລະເມືອງທຸກຄົນຮັບຮູ້ ແລະ ເຂົ້າໃຈເຖິງຄວາມໝາຍ, ຄວາມສຳຄັນ

ແລະ ຜົນປະໂຫຍດ ທີ່ຈະໄດ້ຮັບຈາກການຢັ້ງຢືນຄວາມຖືກຕ້ອງຂອງສັນຍາ ແລະ ເອກະສານຕ່າງໆ ໂດຍຫ້ອງການ ແລະ ໜ່ວຍງານທະບຽນສານ.

5. ໃຫ້ພະແນກຍຸຕິທຳແຂວງ, ບັນດາເມືອງ ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງຂອງຫ້ອງການ ແລະໜ່ວຍງານທະບຽນສານໃນຂັ້ນຂອງຕົນ ໃນນີ້, ເມືອງໃດທີ່ມີການສ້າງຕັ້ງຂຶ້ນແລ້ວ, ກໍໃຫ້ປັບປຸງໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ; ເມືອງໃດຫາກຍັງບໍ່ທັນມີການສ້າງຕັ້ງໜ່ວຍງານທະບຽນສານ ກໍ່ໃຫ້ຄົ້ນຄ້ວາ ແລະ ດຳເນີນການສ້າງຕັ້ງໃຫ້ເປັນລະບົບຄົບຊຸດ ພ້ອມທັງຊີ້ນຳ-ນຳພາອົງການດັ່ງກ່າວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ຖືກຕ້ອງ, ຄົບຖ້ວນ ຕາມທີ່ກຳນົດໄວ້ໃນກົດໝາຍ, ແນໃສ່ຍົກສູງຄຸນນະພາບຂອງວຽກງານທະບຽນສານ, ເພື່ອສະໜອງຂໍ້ມູນທີ່ຊັດເຈນໃຫ້ແກ່ການດຳເນີນຄະດີຕາມຂະບວນການຍຸຕິທຳໃຫ້ມີຄວາມວ່ອງໄວ ແລະ ຖືກຕ້ອງ, ທັງຮັບປະກັນການຈັດຕັ້ງປະຕິບັດຄຳຕັດສິນຂອງສານໃຫ້ມີຄວາມວ່ອງໄວ, ເຂັ້ມງວດ ແລະ ສັກສິດຫຼາຍຂຶ້ນ.

6. ໃຫ້ຄະນະພັກ, ອົງການປົກຄອງ, ເພີ່ມທະວີຄວາມເອົາໃຈໃສ່ໃກ້ສິດຕິດແທດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ: ງົບປະມານ, ສະຖານທີ່ເຮັດວຽກ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ເພື່ອໃຫ້ອົງການດັ່ງກ່າວສາມາດປະຕິບັດພາລະບົດບາດສິດ ແລະ ໜ້າທີ່ຂອງຕົນຢ່າງເຕັມສ່ວນ, ແນໃສ່ຮັບປະກັນການບໍລິການສັງຄົມດ້ວຍຄວາມວ່ອງໄວ, ຖືກຕ້ອງ, ມີປະສິດທິຜົນສູງ ແລະ ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

7. ໃຫ້ພະແນກຍຸຕິທຳແຂວງ ເປັນເຈົ້າການປະສານສົມທົບ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ, ພ້ອມທັງສະຫຼຸບ, ສັງລວມ ແລະ ລາຍງານໃຫ້ຂັ້ນເທິງຢ່າງເປັນປົກກະຕິ ເພື່ອຊາບ ແລະ ມີທິດຊີ້ນຳ.

8. ບັນດາຫົວໜ້າພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ, ປກສ ແຂວງ, ເຈົ້າເມືອງ, ພາກສ່ວນທີ່ກ່ຽວຂ້ອງ ແລະ ພົນລະເມືອງທຸກຄົນຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ໃຫ້ໄດ້ຮັບຜົນດີ.

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປ.ກ່ານເຈົ້າແຂວງ

ບ່ອນນຳສົ່ງ:

1. ຄະນະປະຈຳພັກແຂວງຜູ້ລະ 1 ສະບັບ ( ເພື່ອຊາບ )
2. ພະແນກການ, ອົງການລັດທຽບເທົ່າ 1 ສະບັບ ( ເພື່ອປະຕິບັດ )
3. ກອງບັນຊາການ ປກສ,ປກຊ ແຂວງ 1 ສະບັບ ( ເພື່ອປະຕິບັດ )
4. ເຈົ້າເມືອງ 5 ເມືອງໆລະ 1 ສະບັບ ( ເພື່ອປະຕິບັດ )
5. ເກັບຮັກສາໄວ້ 1 ສະບັບ

ແຂວງອັດຕະປື

ພອນສະໄໝ ມຽງລາວັນ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ່...903../ຈຂ.ອປ

ທີ່ ແຂວງອັດຕະປື, ວັນທີ...07 ກັນຍາ 2016

# ຄຳສັ່ງ
# ຂອງເຈົ້າແຂວງ
## ວ່າດ້ວຍການກວດກາ, ເກັບກຳຂໍ້ມູນເຂົ້າສຳມະໂນ ແລະ ອອກສິດໃຊ້ທີ່ດິນ.

**ເຖິງ:** ບັນດາທ່ານຫົວໜ້າພະແນກການ ,ຫ້ອງການທຽບເທົ່າ,ເຈົ້າເມືອງ 5 ຕົວເມືອງຕະຫຼອດຮອດ ພະນັກງານທະຫານຕຳຫຼວດແລະພໍ່ແມ່ປະຊົນບັນດາເຜົ່າທຸກທົ່ວໜ້າຊາບ.

**ເລື່ອງ:** ການກວດກາ, ເກັບກຳຂໍ້ມູນຂຶ້ນບັນຊີທີ່ດິນເຂົ້າສຳມະໂນ ແລະ ອອກສິດໃຊ້ທີ່ດິນ.

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນແຫ່ງ ສປປລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ.
- ອີງຕາມ ກົດໝາຍທີ່ດິນ ເລກທີ 04/ ສພຊ, ລົງວັນທີ 21 ຕຸລາ 2003.
- ອີງໃສ່: ຄວາມເຫັນດີເປັນເອກະພາບ ໃນກອງປະຊຸມຄະນະປະຈຳພັກແຂວງ ຄັ້ງວັນທີ : 05 / 05 /2016

ເພື່ອເປັນການສືບຕໍ່ຜັນຂະຫຍາຍຈັດຕັ້ງປະຕິບັດກົດໝາຍທີ່ດິນເລກທີ: 04/ ສພຊ, ລົງວັນທີ 21/ ຕຸລາ /2003 ແລະ ດຳລັດເລກທີ: 88/ນຍ ລົງວັນທີ : 03 ມິຖຸນາ 2008 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍທີ່ດິນ: ເປັນຕົ້ນແມ່ນການຄຸ້ມຄອງການປົກປັກຮັກສານຳໃຊ້ທີ່ດິນ,ການພັດທະນາທີ່ດິນໃຫ້ມີຄວາມສະຫງົບເປັນລະບຽບຮຽບຮ້ອຍມີຄວາມຍຸດຕິທຳມີປະສິດທິພາບ ແລະ ປະສິດທິຜົນເປັນເອກະພາບໃນທົ່ວແຂວງທັງເປັນການສ້າງລາຍຮັບເຂົ້າງົບປະມານຂອງແຂວງນັບມື້ນັບເພີ່ມຂຶ້ນ.

**ເຈົ້າແຂວງອອກຄຳສັ່ງແນະນຳດັ່ງນີ້:**

1. ມອບໃຫ້ພະແນກ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການ ປະສານສົມທົບກັບພະແນການເງິນແຂວງ, ພະແນກ ສ່ວຍສາອາກອນແຂວງ,ຄະນະໂຄຊະນາອົບຮົມແຂວງ , ເຈົ້າເມືອງ 5 ຕົວເມືອງ ແລະ ທຸກພາກສ່ວນ ກ່ຽວຂ້ອງ ສືບຕໍ່ ຝັນຂະຫຍາຍເຜີຍແຜ່ກົດໝາຍທີ່ດິນ ເລກທີ: 04/ສພຊ , ລງົວັນທີ 21 ຕຸລາ 2003 ແລະ ນິຕິກຳຕ່າງ ໆ ກ່ຽວກັບວຽກງານຄຸ້ມຄອງທີ່ດິນ ລົງສູ່ຮາກຖານບ້ານໃຫ້ເລິກເຊິ່ງທົ່ວເຖິງ. ສຳລັບຂັ້ນເມືອງ ແມ່ນມອບໃຫ້ທ່ານ ເຈົ້າເມືອງ ຫຼື ຮອງເຈົ້າເມືອງເປັນຜູ້ ຊີ້ນຳໂດຍກົງ ຕໍ່ຫ້ອງ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມເມືອງ 5 ຕົວເມືອງ, ເພື່ອອອກແຈ້ງການຜັນຂະຫຍາຍຄຳສັ່ງສະບັບນີ້ໃຫ້ບັນດາພໍ່ແມ່ປະຊາຊົນພາຍໃນເມືອງທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນໃຫ້ມີຄວາມຮັບຮູ້ເຊື່ອມຊຶມ ຢ່າງເລິກເຊິ່ງ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ.

2. ມອບໃຫ້ພະແນກ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການປະສານສົມທົບ ກັບທຸກພາກສ່ວນ ກ່ຽວຂ້ອງໃນການກວດກາ ເກັບກຳຂໍ້ມູນທີ່ດິນເຂົ້າສຳມະໂນ ແລະ ອອກສິດໃຊ້ທີ່ດິນຄືນໃໝ່ ໃຫ້ຄົບຖ້ວນ ໃນ 5ຕົວເມືອງ ໃຫ້ສຳເລັດພາຍໃນກຳນົດ 6 ເດືອນ ນັບແຕ່ ວັນທີ. / /2016ຫາວັນທີ. / /2016 ໝາຍຄວາມວ່າ ຜ່ານການກວດກາ, ເກັບກຳຂໍ້ມູນ ກ່ຽວກັບທີ່ດິນຄັ້ງນີ້ ດິນຕອນໃດທີ່ບຸກຄົນໄດ້ມີການຄອບຄອງ ການພັດທະນາ ດ້ວຍຄວາມສະຫງົບ ບໍ່ນອນຢູ່ໃນຂໍ້ຫ້າມກົດໝາຍທີ່ດິນເກືອດຫ້າມ ແຕ່ຍັງບໍ່ທັນມີເອກະສານ ຄົບຖ້ວນແມ່ນໃຫ້ ຂະແໜງການທີ່ດິນແຂວງ, ເມືອງອອກເອກະສານສິດນຳໃຊ້ທີ່ດິນໃຫ້ເລີຍ ເພື່ອເຂົາເຈົ້າໄດ້ຄຸ້ມຄອງນຳໃຊ້ ຢ່າງຖືກຕ້ອງຕາມລະບຽບກົດໝາຍ ເພື່ອສາມາດ ກຳໃຫ້ໄດ້ ແຕ່ລະຄອບຄົວ ມີດິນຈັກຕອນ, ມີເນື້ອທີ່ເທົ່າໃດ ມີຈັກປະເພດດິນ ທັງເປັນຂໍ້ມູນພື້ນຖານ ສິ່ງໃຫ້ຂະແໜງການເງິນເກັບພາສີທີ່ດິນຢ່າງຖືກຕ້ອງຄົບຖ້ວນ.

3. ໃຫ້ພໍ່ແມ່ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ຕະຫຼອດຮອດແມ່ຄ້າຊາວຂາຍພາຍໃນແຂວງອັດຕະປືຈົ່ງຮັບຊາບວ່າ: ຜູ້ໃດທີ່ມີດິນ ທີ່ຕົນໄດ້ຄອບຄອງ ແລະ ປົກປັກຮັກສາມີ ຄວາມສະຫງົບເປັນເວລາຍາວນານ ຕາມປະເພນີມີການພັດທະນາ ທີ່ບໍ່ນອນໃນຂໍ້ຫ້າມດັ່ງຂໍ້ທີ6 ລຸ່ມນີ້ ໂດຍຖືກຕ້ອງຕາມກົດໝາຍທີ່ດິນເລກທີ 04/ ສພຊ, ລົງວັນທີ 21 ຕຸລາ 2003 ກຳນົດໄວ້ . ແຕ່ຍັງບໍ່ທັນມີເອກະສານ, ມີເອກະສານສິດໃຊ້ ແລະ ສິດນຳໃຊ້ທີ່ດິນ ( ຄື:ໃບແຈ້ງທີ່ດິນ,ໃບແຜນທີ່ຕາດິນ ແລະ ໃບຕາດິນ) ຈົ່ງພາກັນຮີບຮ້ອງນຳເອົາເອກະສານຢັ້ງຢືນຂອງທ່ານເຂົ້າມາແຈ້ງຢູ່ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ຫຼືແຈ້ງໃຫ້ໜ່ວຍງານພາສີທີ່ດິນບ້ານບ່ອນທີ່ດິນຕັ້ງຢູ່ ເພື່ອທຳການລົງກວດກາຕົວຈິງ ແລະ ສັງລວມເກັບກຳຂໍ້ມູນບັນທຶກ ພາຍໃນກຳນົດ 30 ວັນ. ແມ່ນໃຫ້ບັນດາຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ລົງສົມທົບກັບອຳນາດການປົກຄອງບ້ານ ເພື່ອເກັບກຳຂໍ້ມູນຕົວຈິງຢ່າງລະອຽດ ເມື່ອເຫັນວ່າຖືກຕ້ອງ ຄົບຖ້ວນ ຕາມລະບຽບກົດໝາຍແລ້ວ ຈິ່ງອອກເອກະສານຢັ້ງຢືນສິດໃຊ້ ແລະ ສິດນຳໃຊ້ທີ່ດິນດັ່ງກ່າວ ໄປຕາມແຕ່ລະກໍລະນີ ໃຫ້ຜູ້ກ່ຽວຂ້ອງຄຸ້ມຄອງນຳໃຊ້ຕໍ່ໄປພ້ອມທັງໃຫ້ມີການ ເສຍພັນທະພາສີອາກອນຕ່າງໆ ຕາມທີ່ລັດໄດ້ກຳນົດໄວ້ຢ່າງຄົບຖ້ວນ.ຖ້າຫາກບຸກຄົນໃດບໍ່ມາແຈ້ງພາຍໃນກຳນົດ 30 ວັນ ຖືວ່າຕອນດິນດັ່ງກ່າວນັ້ນແມ່ນເປັນການນຳໃຊ້ທີ່ດິນບໍ່ຖືກຕ້ອງຕາມລະບຽບກົດໝາຍ. ບໍ່ໄດ້ຂຶ້ນສຳມະໂນຕອນດິນ, ຖ້າຫາກວ່າກວດພົບເຫັນການນຳໃຊ້ທີ່ດິນດັ່ງກ່າວນັ້ນຫາກບໍ່ຖືກຕ້ອງຕາມເປົ້າໝາຍ ຫຼື ມີການປິດບັງດ້ານເນື້ອທີ່ການນຳໃຊ້. ແມ່ນຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ດິນ ພາກທີ V ມາດຕາ 83 , ຖ້າຕ້ອງການໃຊ້ເນື້ອທີ່ສ່ວນເກີນຈະຕ້ອງໄດ້ເສຍພາສີຄືນຫຼັງ.

4. ສຳລັບດິນລັດ, ດິນລວມໝູ່, ດິນສຳນັກງານອົງການຕ່າງໆ ມອບໃຫ້ພະແນກການອ້ອມຂ້າງແຂວງ, ກອງບັນຊາການ ປກສ ປກຊ ແຂວງ ແລະ 5 ຕົວເມືອງ ໃຫ້ກວດກາເບິ່ງວ່າ ທີ່ດິນແຕ່ລະຕອນ ທີ່ຕົນໄດ້ຄຸ້ມຄອງນຳໃຊ້ນັ້ນ ມີເອກະສານຄົບຖ້ວນຖືກຕ້ອງຕາມລະບຽບກົດໝາຍແລ້ວບໍ ຖ້າຍັງບໍ່ທັນມີ ໃຫ້ຮີບຮ້ອນໄປຂຶ້ນບັນຊີປະກອບເອກະສານຕ່າງໆ ໃຫ້ຄົບຖ້ວນ ຢູ່ນຳພະແນກ ພຊສ ແຂວງຫຼື ຫ້ອງການ ຊສ ເມືອງ.

5. ຫ້າມຈັບຈອງທີ່ດິນ ຫຼື ບຸກລຸກທີ່ດິນ: ການຈັບຈອງ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແມ່ນໃຫ້ພະແນກຊັບພະຍາກອນທຳມະຊາດສິ່ງແວດລ້ອມແຂວງເປັນເຈົ້າການປະສານສົມທົບກັບອຳນາດການປົກຄອງເມືອງ5ຕົວເມືອງ , ພະແນກການກ່ຽວຂ້ອງອອ້ມແຂວງ ແລະ ທຸກພາກສ່ວນກ່ຽວຂ້ອງເພື່ອດຳເນີນການ ລົບລ້າງໃນກໍລະນີຫາກ ພົບເຫັນມີການກໍ່ຄວາມເສຍຫາຍຕ້ອງດຳເນີນຄະດີຕາມຂະບວນການຍຸດຕິທຳຢ່າງເຂັ້ມງວດການຈັບຈອງບຸກລຸກທີ່ດິນທີ່ບໍ່ຖືກຕ້ອງສະແດງອອກດັ່ງນີ້: